**ມິຊຊາອາທິດທີ 5 ກໍານົດປາສກາ**

**ວັນທີ 19 ພຶດສະພາ 2019**



**ພຣະວໍລະສານໂດຍນັກບຸນຢວງ 13, 31-33ກ, 34-35**

ເມື່ອຢູດາອອກໜີໄປແລ້ວ, ພຣະເຢຊູເຈົ້າກ່າວວ່າ: ດຽວນີ້ບຸດແຫ່ງມະນຸດໄດ້ຮັບກຽດມຸງຄຸນແລ້ວ. ແລະພຣະເປັນເຈົ້າກໍໄດ້ຮັບກຽດມຸງຄຸນໃນບຸດແຫ່ງມະນຸດດ້ວຍ. ຖ້າພຣະເປັນເຈົ້າໄດ້ຮັບກຽດມຸງຄຸນໃນບຸດແຫ່ງມະນຸດ ພຣະເປັນເຈົ້າກໍຈະໃຫ້ກຽດບຸດແຫ່ງມະນຸດໃນພຣະອົງດ້ວຍ. ແລະພຣະອົງຈະໃຫ້ກຽດບຸດແຫ່ງມະນຸດໃນບໍ່ເຫິງ.

ພວກລູກທີ່ຮັກ, ເຮົາຈະຢູ່ນໍາພວກເຈົ້າອີກບໍ່ດົນນານ. ເຮົາມອບບັນຍັດໃໝ່ໃຫ້ພວກເຈົ້າຄືຈົ່ງຮັກກັນແລະກັນເໝືອນເຮົາໄດ້ຮັກພວກເຈົ້າ. ແມ່ນແລ້ວ, ພວກເຈົ້າຈົ່ງຮັກແພງກັນ. ທຸກຄົນຈະຮູ້ວ່າພວກເຈົ້າເປັນສິດຂອງເຮົາ ກໍຍ້ອນເຫັນວ່າພວກເຈົ້າມີຄວາມຮັກຕໍ່ກັນແລະກັນນັ້ນເອງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 13, 31-33ກ, 34-35**

ວາຈາຂອງພຣະເຈົ້າວັນນີ້ເລົ່າໃຫ້ພວກເຮົາເຫັນເຖິງເວລາທີ່ພຣະເຢຊູເຈົ້າຈະຮັບທົນທໍລະມານແລະຕາຍນັ້ນໃກ້ເຂົ້າມາແລ້ວ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: « ດຽວນີ້ບຸດແຫ່ງມະນຸດໄດ້ຮັບກຽດມຸງຄຸນແລ້ວ ». ແຕ່ກຽດມຸງຄຸນທີ່ພຣະເຢຊູເຈົ້າກ່າວມານີ້ແມ່ນຫຍັງ? ເປັນກຽດມຸງຄຸນຢູ່ໃນໂລກນີ້ ຫລືກຽດມຸງຄຸນຢູ່ໃນໂລກໜ້າ? ແລະກຽດມຸງຄຸນຂອງພຣະເຢຊູເຈົ້າມີຄວາມກ່ຽວພັນຫຍັງກັບພວກເຮົາ?

ກຽດມຸງຄຸນຂອງພຣະເຢຊູເຈົ້າຄືການທຳຕາມນ້ຳພຣະໄທຂອງພຣະບິດາຜູ້ຊົງໃຊ້ພຣະອົງມາໃນໂລກນີ້. ແລະນ້ຳພຣະໄທຂອງພຣະບິດາເຈົ້າຄືທຸກຄົນທີ່ເຊື່ອໃນພຣະເຢຊູພຣະບຸດຂອງພຣະອົງຈະໄດ້ຮັບຄວາມຣອດ. ຍ້ອນພຣະເຢຊູເຈົ້າມາໃນໂລກນີ້ບໍ່ແມ່ນເພື່ອຕັດສິນໂລກ ແຕ່ເພື່ອຊ່ວຍທຸກຄົນທີ່ພຣະບິດາມອບໃຫ້ພຣະອົງນັ້ນໃຫ້ໄດ້ຊີວິດ. ແລະເພື່ອໃຫ້ພວກເຮົາໄດ້ຣອດແລະມີຊີວິດ ພຣະເຢຊູເຈົ້າຈຳຕ້ອງສະລະຊີວິດຂອງພຣະອົງເອງເພື່ອພວກເຮົາ. ເພາະບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ຍ້ອນພຣະເຢຊູເຈົ້າຮັກພວກເຮົາ ພຣະອົງຈຶ່ງປາດຖະໜາໃຫ້ພວກເຮົາເອົາແບບຢ່າງພຣະອົງຄືໃຫ້ພວກເຮົາຮັກກັນແລະກັນ.

ດັ່ງນັ້ນ, ກ່ອນທີ່ພຣະເຢຊູເຈົ້າຈະມອບຊີວິດຂອງພຣະອົງຜ່ານການຮັບທໍລະມານແລະຕາຍ ພຣະອົງຈຶ່ງມອບບັນຍັດໃໝ່ອັນແມ່ນບັນຍັດແຫ່ງຮັກໃຫ້ພວກລູກສິດກໍຄືໃຫ້ພວກເຮົາແຕ່ລະຄົນ. ເປັນຫຍັງບັນຍັດແຫ່ງຮັກຈຶ່ງເປັນບັນຍັດໃໝ່? ບັນຍັດນີ້ຈະເປັນບັນຍັດໃໝ່ກໍຕໍ່ເມື່ອທຸກຄັ້ງທີ່ພວກເຮົາຮັກກັນແລະກັນດັ່ງທີ່ພຣະເຢຊູເຈົ້າຊົງຮັກພວກເຮົາ. ແນ່ນອນ, ຄວາມຮັກເໝືອນດັ່ງພຣະເຢຊູເຈົ້າທີ່ມີຕໍ່ພວກເຮົາບໍ່ແມ່ນສິ່ງທີ່ງ່າຍ. ແຕ່ພຣະເຢຊູເຈົ້າບໍ່ຮ້ອງຂໍນຳພວກເຮົາໃນສິ່ງທີ່ເໜືອບ່າກວ່າແຮງ. ພຣະອົງປາດຖະໜາໃຫ້ພວກເຮົາເລີ່ມຕົ້ນຈາກສິ່ງທີ່ຕ່ຳນ້ອຍໃນຊີວິດແຕ່ລະວັນຄື: ການຮູ້ຈັກໃຫ້ອະໄພ, ການບໍ່ເຫັນແກ່ຕົວ, ການທີ່ພວກເຮົາບໍ່ເບິ່ງຄົນອື່ນໃນດ້ານລົບ, ການຮັບຟັງຄົນອື່ນແລະຮູ້ຈັກແບ່ງປັນໃນສິ່ງທີ່ຕົນມີ ບໍ່ວ່າຈະເປັນສະຕິປັນຍາ, ເຫື່ອແຮງ, ເວລາ, ຄວາມອີດູສົງສານ, ວັດຖຸສິ່ງຂອງ ຫລືຄຳເວົ້າທີ່ຊ່ວຍຄົນອື່ນໃຫ້ມີຄວາມຫວັງ, ຄວາມມ່ວນຊື່ນ. ສິ່ງເຫລົ່ານີ້ຄືຄວາມຮັກທີ່ພວກເຮົາສາມາດແບ່ງປັນໃຫ້ກັບຜູ້ທີ່ຢູ່ໃກ້ຊິດພວກເຮົາແລະຜູ້ຄົນທີ່ພວກເຮົາພົບພໍ້ໃນຊີວິດ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ປ່ຽນດວງໃຈຂອງພວກເຮົາທີ່ແຂງກະດ້າງຂາດຄວາມຮັກ ໃຫ້ເປັນດວງໃຈທີ່ອ່ອນໂຍນມີຄວາມເມດຕາສົງສານຕໍ່ຄົນອື່ນ, ຮູ້ຈັກແບ່ງປັນແລະໃຫ້ອະໄພຊຶ່ງກັນແລະກັນເພື່ອພຣະບິດາເຈົ້າສະຫວັນຈະໄດ້ໃຫ້ອະໄພພວກເຮົາເຊັ່ນດຽວກັນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ